ສະມາຄົມແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ຜູ້ວ່າການ ທຫລ ຕ້ອນຮັບ ຄະນະທະນາຄານແຫ່ງຊາດຈີນ



ໃນຕອນເຊົ້າຂອງວັນທີ 13 ມິນາ 2018 ທີ່ຫ້ອງຮັບແຂກ ທຫລ ທ່ານ ສົມພາວ ໄຟສິດ ຜູ້ວ່າການ ທຫລ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍານັບຂອງທ່ານ ຫວັງ ສີ ສອນ ປະທານກວດກາທະນາຄານແຫ່ງຊາດຈີນ ພ້ອມດ້ວຍຄະນະ. ພ້ອມນັ້ນ, ທ່ານ ຫວັງສີສອນ ກໍ່ໄດ້ລາຍງານສະພາບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງຊາດຈີນ ກ່ຽວກັບການໃຫ້ບໍລິການ ແລະ ການຂະຫຍາຍຕາໜ່າງການໃຫ້ບໍລິການຂອງທະນາຄານທັງພາຍໃນ ແລະ ຕ່າງປະເທດ ລວມທັງການເຄື່ອນໄຫວຂອງທະນາຄານແຫ່ງຊາດຈີນ ສາຂາລາວ.

ທ່ານ ສົມພາວ ໄຟສິດ ຜູ້ວ່າການ ທຫລ ໄດ້ຕີລາຄາສູງຕໍ່ການມາຢ້ຽມຢາມຂອງທ່ານ ຫວັງ ສີ ສອນ ເຊິ່ງທ່ານໄດ້ຍ້ອງຍໍຊົມເຊີຍຜົນສໍາເລັດທີ່ທະນາຄານດັ່ງກ່າວສາມາດປະຕິບັດໄດ້.



ໃນລະຫວ່າງການພົບປະ ທ່ານຜູ້ວ່າການ ທຫລ ໄດ້ກ່າວວ່າ: ໃນປະຈຸບັນ ສປປ ລາວ ມີຄວາມຕ້ອງການທຶນ ເພື່ອໃຊ້ເຂົ້າໃນການພັດທະນາໃນຫຼາຍຂົງເຂດ ເປັນຈຳນວນຫຼາຍ ເປັນຕົ້ນການກໍ່ສ້າງພື້ນຖານໂຄງລ່າງ ແລະ ປັບປຸງກົນໄກເສດຖະກິດໃຫ້ມີຄວາມໜັກແໜ້ນເຂັ້ມແຂງ; ສຳລັບໂຄງການກໍ່ສ້າງທາງລົດໄຟລາວ-ຈີນນັ້ນ ແມ່ນຮຽກຮ້ອງໃຫ້ທະນາຄານດັ່ງກ່າວ ໂດຍສະເພາະທະນາຄານສາຂາລາວ ຈົ່ງອຳນວຍຄວາມສະດວກໃນການບໍລິການໂອນເງິນ, ບໍລິການແລກປ່ຽນສະກຸນເງິນຢວນ ແລະ ບໍລິການຊຳລະສະສາງຕ່າງໆ ບໍ່ວ່າຈະເປັນຜູ້ຮັບເໝົາລາຍໃຫຍ່ ຫຼື ລາຍຍ່ອຍ ພ້ອມນັ້ນ, ກໍ່ໃຫ້ເພີ່ມຜະລິດຕະພັນການບໍລິການໃຫ້ມີຫຼາກຫຼາຍຍິ່ງຂຶ້ນ.

**# ຂ່າວ-ພາບ: ສົມອົກ ເຄນຄຳແພງ**

ຢູ່ເມືອງລາວ ໃຊ້ເງິນກີບລາວ ຊາດລາວກ້າວໄປ